ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 2:
## Thinking Concept of Lao Feudal System

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ

**ລະຫັດ:** 0907409

**ບົດທີ 2:** ລະບົບແນວຄິດຂອງລະບອບສັກດີນາລາວ

ເວລາ: 90 ນາທີ

**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ

**ປີ:** 3

**ພາກຮຽນ:** 1

**ສົກຮຽນ:** 2022-2023

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desired Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້ເຖິງ:<br>- ການເຊື່ອຖືໄສຍະສາດ<br>- ການເຊື່ອຖືຜີ<br>- ການເຊື່ອຖືສາສະໜາພາມ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈສະພາບ:<br>- ໄສຍະສາດ<br>- ຄວາມເຊື່ອເລື່ອງຜີ<br>- ສາສະໜາພາມ</td><td>ຄຳຖາມຫຼັກ (Questions):<br>1) ການເຊື່ອຖືໄສຍະສາດ (ຜີ) ຂອງ ປຊ ລາວ ສະ ແດງອອກແນວໃດແດ່?<br>2) ເປັນຫຍັງຈິ່ງບໍ່ເອີ້ນວ່າສາສະໜາຜີ?<br>3) ເປັນຫຍັງ ປຊ ລາວຈິ່ງມີການເຊື່ອຖືໄສຍະສາດ ?<br>4) ສາສະໜາພາມແມ່ນສາສະໜາແນວໃດແດ່?<br>5) ເນື້ອໃນຂອງສາສະໜາພາມມີແນວໃດແດ່?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງການເຊື່ອຖືໄສຍະສາດ, ການເຊື່ອຖືຜີ, ສາສະໜາພາມ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງການເຊື່ອຖືໄສຍະສາດ, ຄວາມເຊື່ອເລື່ອງຜີ ແລະ ການເຊື່ອຖືສາສະໜາມພາມ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence )</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
<tr><td colspan="2">- ສື່ການສອນມີ:</td></tr>
</table>

ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມວັນນະຄະດີອິນເດຍ, ປຶ້ມຄະຕິຊົນພື້ນເມືອງ, ປຶ້ມພະເຈົ້າສິບຊາດຢ່າງຫຍໍ້, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.

- **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ:**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງທີ່ຕັ້ງຂອງອານາຈັກລາວລ້ານຊ້າງ, ດ້ານພູມສາດ, ດ້ານປະຫວັດສາດ ແລະ ດ້ານວັນນະຄະດີໂດຍຫຍໍ້.
- **ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 2**

**ລະບົບແນວຄິດຂອງລະບອບສັກດີນາລາວ**

**2. 1 ການເຊື່ອຖືໄສຍະສາດ (ເຊື່ອຖືຜີ)** (30 ນາທີ)

<u>ກິດຈະກຳ 1:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
- ການເຊື່ອຖືໄສຍະສາດ (ຜີ) ຂອງ ປຊ ລາວ ສະແດງອອກແນວໃດແດ່?
- ເປັນຫຍັງຈິ່ງບໍ່ເອີ້ນວ່າສາສະໜາຜີ?
- ເປັນຫຍັງ ປຊ ລາວຈິ່ງມີການເຊື່ອຖືໄສຍະສາດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ຜີ: ເປັນສິ່ງທີ່ມະນຸດບໍ່ສາມາດເບິ່ງເຫັນໄດ້ ແລະບໍ່ສາມາດສຳຜັດໄດ້, ແຕ່ເຊື່ອວ່າມີຈິງ ແລະອາດປາກົດຮ່າງໃຫ້ເຫັນໄດ້ໃນບາງຄັ້ງຄາວ. ຜີ: ເປັນ ຄຳສັບນາມມະທຳ ຄຳໜຶ່ງທີ່ບັນພະຊົນຂອງເຮົາສົມມຸດຂຶ້ນມາເພື່ອເອີ້ນສິ່ງທີ່ລຶກລັບ, ບໍ່ມີຕົວຕົນ ແລະ ຖືວ່າມີອິດທິລິດພິດສະຫວົງ ສາມາດດົນບັນດານໄດ້ທຸກສິ່ງທຸກຢ່າງທັງອັນດີ ແລະອັນຮ້າຍ (ຄຳຮຸ່ງ ແສງມະນີ, 2004).

ປະຊາຊົນລາວຂອງພວກເຮົາຕັ້ງແຕ່ດຶກດຳບັນເປັນຕົ້ນມາ. ແມ່ນເຊື່ອຖືຜີສາງນາງຮ້າຍກໍເນື່ອງຈາກວ່າພວກເຂົາແກ້ໄຂບໍ່ຕົກຕໍ່ການປ່ຽນແປງຂອງໂລກອ້ອມຂ້າງຂອງເຂົາເຈົ້າແຕ່ລະມື້ແຕ່ລະວັນເຊັ່ນ: ການຫັນປ່ຽນຈາກທຳມະຊາດ, ຝົນຕົກຟ້າແດດ, ຢູ່ຕາມພູຜາປ່າດົງມີບ່ອນເລິກ, ບ່ອນຕື້ນ, ບ່ອນຕ່ຳ, ບ່ອນສູງ ແລະ ອື່ນໆ... ເຫດການ ແລະປາກົດການຂອງທຳມະຊາດແມ່ນມີເຈົ້າປົກຄອງເພື່ອເນັ້ນໜັກຕໍ່ເຫດການຂ້າງເທິງເຂົາເຈົ້າຈິ່ງນ້ຳເອົາການດຳລົງຊີວິດຂອງຄົນເຮົາໄປປຽບທຽບກັບເຫດການຂອງທຳມະຊາດ, ດ້ວຍການປະດິດແຕ່ງທີ່ວ່າ:

ກົກໄມ້ໃຫຍ່ ມີຜີ

ສາວຜູ້ດີ ມີຊູ້

ກົກໄມ້ໃຫຍ່ບໍ່ມີຜີ ສາວຜູ້ດີບໍ່ມີຊູ້

ທໍລະນີອົກແຕກ ຕາຍແລ້ວ

ຜີຕາແຮກບໍ່ໄດ້ກິນໄກ່ຕົ້ມ ນາເຂົ້າຈຶ່ງບໍ່ງາມ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ເຂົາເຈົ້າຍັງປັ້ນແຕ່ງວັນນະຄະດີເປັນບົດເລື່ອງຕ່າງໆເພື່ອແກ້ໄຂ ແລະ ອະທິບາຍເຖິງເຫດການຂອງທຳມະຊາດດັ່ງກ່າວເຊັ່ນ: ເລື່ອງ “ທ້າວຕຶກຄຶກ” ເພື່ອອະທິບາຍວ່າ: ເປັນຫຍັງປະເທດລາວຈຶ່ງມີພູພຽງ, ທົ່ງພຽງ ແລະ ພູສູງ. ບ່ອນທີ່ທ້າວຕຶກຄຶກຄາດນາແລ້ວແມ່ນທົ່ງພຽງ, ບ່ອນທ້າວຕຶກຄຶກຄາດບໍ່ທັນແລ້ວແມ່ນເປັນບ່ອນພູພຽງ, ບ່ອນທີ່ບໍ່ທັນໄດ້ຄາດ ແລະ ຕາຍກ່ອນແມ່ນເປັນພູສູງ. ຈາກນັ້ນຍັງມີບົດເລື່ອງທີ່ອະທິບາຍ ຫຼື ບອກຊື່ຂອງສະຖານທີ່ຕ່າງໆຂອງປາກົດການທຳມະຊາດອີກເຊັ່ນ: ບັນດາເກາະດອນຕ່າງໆທີ່ມີຕາມແມ່ນ້ຳຂອງຄື: ດອນເຂາະ, ດອນໂຂງ, ດອນແດງ, ດອນປະກຳ, ດອນໄຊ ແລະ ດອນອື່ນໆ... ແມ່ນມາຈາກເລື່ອງ “ນາງມະໂລງ ແລະ ທ້າວບາຈຽງ” ນອກຈາກນັ້ນຍັງມີບົດເລື່ອງ “ຜາແດງນາງໄອ່” ເພື່ອແກ້ໄຂ ແລະ ອະທິບາຍເຖິງໜອງຫຼົ້ມຕ່າງໆ. ເລື່ອງ “ພູທ້າວ-ພູນາງ”,“ດອນຊ້າງຄູ່” ແລະ ອື່ນໆອີກ... ລ້ວນແຕ່ໄດ້ສ້າງເພື່ອອະທິບາຍເຖິງເຫດການ ແລະ ປາກົດການຂອງທຳມະຊາດທັງໝົດ. ອີກບັນຫາໜຶ່ງກ່ຽວກັບສັດສາວາສິ່ງ ແລະ ເຫດການເກີດຂຶ້ນແຕ່ລະວັນຢູ່ອ້ອມຂ້າງເຂົາເຈົ້າ, ບາງສິ່ງກໍໃຫ້ປະໂຫຍດ ແຕ່ບາງສິ່ງກໍບໍ່ໃຫ້ປະໂຫຍດແກ່ເຂົາເຈົ້າ, ແຕ່ເຂົາເຈົ້າມີຄວາມອີດູສົງສານ, ເຂົາເຈົ້າຈຶ່ງຖືເອົາສັດສາ ແລະຊາດໄມ້ດັ່ງກ່າວມາເປັນໂຄດ, ເປັນເຊື້ອ ແລະ ເປັນສິ່ງເພິ່ງພາອາໄສທາງດ້ານຈິດໃຈດັ່ງເຜົ່າໄຕລາວໄດ້ຈັດເປັນຈາວຄື: ຈາວເລືອງເອົາເລືອງມາເປັນເຊື້ອ, ຈາວຣິເອົາຣິມາເປັນເຊື້ອ, ຈາວລໍເອົາລໍມາເປັນເຊື່ອ ແລະ ອື່ນໆ. ບັນຫາຂ້າງເທິງນີ້ກໍເຮັດໃຫ້ຊາວບູຮານມີການເຊື່ອຖືໄສຍະສາດເໝືອນກັນ. ຈາກນັ້ນ, ກ່ຽວກັບຍາດຕິວົງສາ, ພໍ່ແມ່ລຸງຕາ, ແມ່ປ້ານ້າສາວ, ປູ່ຍ່າຕາຍາຍທີ່ຕົນຮັກ ແລະ ນັບຖືເມື່ອເຂົາຈູດຜີຕາຍໄປແລ້ວ, ລູກຫຼານຜູ້ທີ່ມີຊີວິດຢູ່, ເພື່ອຈາລຶກບຸນຄຸນຂອງເພິ່ນພວກລູກຫຼານກໍໄດ້ແຈກທານຫາ ຫຼື ບະບົນນຳ. ເຫດການນີ້ກໍເຮັດໃຫ້ເຂົາເຊື່ອຖືໄສຍະສາດ. ອີກບັນຫາໜຶ່ງເມື່ອຍເຂົາເຈົ້າເຈັບເປັນ, ຂາດຢາປົ່ນປົວ, ຂາດຄວາມຮັບຮູ້ທາງດ້ານພະຍາດໂລຄາ, ເຂົາເຈົ້າກໍຄິດວ່າຄົນເຈັບເປັນດັ່ງກ່າວກໍແມ່ນຜີເຮັດ - ຜີທຳ, ເພື່ອຢາກຫາຍພະຍາດໂລຄານັ້ນພວກເຂົາຕ້ອງເສັນ, ຕ້ອງເຍົາ, ຕ້ອງບະ, ຕ້ອງບົນ ນີ້ກໍແມ່ນເຫດການໜຶ່ງທີ່ເຮັດໃຫ້ເຂົາເຊື່ອຖືໄສຍະສາດ.

ອາດສະຫຼຸບໄດ້ວ່າ: ການເຊື່ອຖືໄສຍະສາດຂອງປະຊາຊົນເຮົາໃນສະໄໝບູຮານ ແມ່ນການຮັບຮູ້ຂອງຄົນເຮົາຖືກຈຳກັດ, ບໍ່ອາດອະທິບາຍເຫດການ ແລະ ປາກົດການຂອງທຳມະຊາດໄດ້. ສະນັ້ນ, ເຂົາເຈົ້າຈຶ່ງອະທິບາຍເຫດການ ແລະ ປາກົດການຂອງທຳມະຊາດດັ່ງກ່າວໄປໃນທາງແງ່ດຽວກັນນັ້ນແມ່ນ “ຜີເຮັດ ຜີສ້າງ” ຕໍ່ມາເມື່ອສາສະໜາພາມເຂົ້າມາໃນລາວຈຶ່ງນຳໃຊ້ເຫດການດັ່ງກ່າວປະກອບດ້ວຍທິດສະດີຂອງຕົນຕື່ມແຖມອີກເຊັ່ນ: “ຜີສ້າງ - ຟ້າແຖນ-ແຖນແຕ່ງ” (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ:2019).

ລັດຖະທຳມະນູນ ກຳນົດສິດ ແລະ ເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ ແລະ ກຳນົດວ່າ: ພົນລະເມືອງລາວທຸກຄົນ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ກ່ຽວກັບສາສະໜາຄວາມເຊື່ອ ຫຼື ຊົນເຜົ່າຂອງເຂົາເຈົ້າ. ລັດຖະທຳມະນູນ ຍັງກຳນົດໄວ້ອີກວ່າ: ລັດ ເຄົາລົບ ແລະ ປົກປ້ອງທຸກກິດຈະກຳທີ່ຖືກຕ້ອງ ຕາມກົດໝາຍຂອງພຸດທະສາ ສະນິກະຊົນ ແລະ ສາສະນິກະຊົນຂອງສາສະໜາອື່ນໆ, “ລະດົມ ແລະ ຊຸກຍູ້” ພະສົງ, ສາມະເນນໃນສາສະໜາພຸດ ກໍ່ຄືນັກບວດຂອງສາສະໜາອື່ນໆໃຫ້ເຂົ້າຮ່ວມຈັດຕັ້ງປະຕິບັດ ບັນດາກິດຈະກຳ “ທີ່ສ້າງປະໂຫຍດໃຫ້ປະເທດຊາດ ແລະ ປະຊາຊົນ.” ພ້ອມນັ້ນ, ລັດຖະທຳມະນູນ ຍັງຈຳກັດທຸກການກະທຳທີ່ ແບ່ງແຍກສາສະໜາ ແລະ ຊັ້ນຄົນຕ່າງໆໃນສັງຄົມ. ດຳລັດນາຍົກລັດຖະມົນຕີ ເລກທີ92 ທີ່ອອກມາໃນປີ2002 ໄດ້ກຳນົດບັນດາລະບຽບການຄຸ້ມຄອງ ການເຄື່ອນໄຫວສາສະໜາ. ໃນເດືອນສິງຫາ ປີ2016, ນາຍົກ ລັດຖະມົນຕີໄດ້ອອກດຳລັດ

ເລກທີ315 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ ເພື່ອປ່ຽນແທນດຳລັດເລກທີ92. ຢ່າງໃດກໍ່ດີ, ດຳລັດ LAOS ບົດລາຍງານວ່າດ້ວຍເສລີພາບໃນການເຊື່ອຖືສາສະໜາສາກົນ, ສະບັບປີ2016 ກະຊວງການຕ່າງປະເທດສະຫະລັດອາເມລິກາ • ສຳນັກງານປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ 4 ສະບັບໃໝ່ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງສົມບ ນເທື່ອ ເນື່ອງຈາກບໍ່ທັນມີຄຳສັ່ງແນະນຳ ການຈັດຕັ້ງປະຕິບັດ; ນອກຈາກນັ້ນ, ອີງຕາມຂໍ້ມູນທີ່ມີໃນທ້າຍປີ2016 ເຫັນວ່າ: ດຳລັດດັ່ງກ່າວ ບໍ່ໄດ້ມີການເຜີຍແຜ່ຢ່າງເປັນທາງການ ນອກເໜືອຈາກທີ່ມີແລກປ່ຽນກັບພະນັກງານອາວຸໂສຈຳນວນໜຶ່ງ ທີ່ເຮັດວຽກໃນຂົງເຂດຄຸ້ມຄອງສາສະໜາ. ລັດຖະທຳມະນ ນ ກໍ່ຄືດຳລັດ 92 ແລະ 315 ກຳນົດວ່າ: ການເຄື່ອນໄຫວສາສະໜາ ຄວນຮັບໃຊ້ຜົນປະໂຫຍດລວມຂອງຊາດ ໂດຍສົ່ງເສີມການພັດທະນາ ແລະ ການສ ກສາ ແລະ ແນະນຳຜູ້ເຊື່ອຖືສາສະໜາ ຂອງ ຕົນໃຫ້ປະພຶດຕົນເປັນພົນລະເມືອງດີ. ລັດຖະບານ ຮັບຮອງຢ່າງເປັນທາງການຕໍ່ສີ່ກຸ່ມສາສະໜາຄື: ສາສະໜາພຸດ, ສາສະໜາຄຣິສຕຽນ, ສາສະໜາ ອິສລາມ ແລະ ບາຮາຍ, ແລະ ຍັງຮຽກຮ້ອງໃຫ້ກຸ່ມສາສະໜາອື່ນໆ ຈົດທະບຽນພາຍໃຕ້ໜຶ່ງໃນສີ່ຂອງກຸ່ມສາສະໜາທີ່ລັດຮັບຮູ້ຢ່າງເປັນທາງການ. ກຸ່ມສາສະນິກະຊົນຄຣິດສຕຽນທີ່ຖືກຮັບຮູ້ແມ່ນຢູ່ໃນຂອບເຂດ ຈຳກັດສະເພາະແຕ່ໂບດກາໂຕລິກ, ໂບດຄຣິສຕະຈັກຂ່າວປະເສີດລາວ (LEC), ແລະ ໂບດຄຣິສຕະຈັກ ອັນເສີາ. ທຸກກຸ່ມນິກາຍຍ່ອຍສາສະໜາຄຣິດຕຽນທີ່ຍັງບໍ່ທັນໄດ້ຈົດທະບຽນ ແລະ ຕ້ອງການຖືກຮັບຮູ້ ຢ່າງເປັນທາງການ ແມ່ນຕ້ອງຈົດທະບຽນໃນຖານະເປັນສ່ວນໜຶ່ງຂອງ LEC ຫຼື ຄຣິດສຕະຈັກອັນເສີາ, ແທນທີ່ຈະໄດ້ຮັບການ ຮັບຮູ້ແບບແຍກສະເພາະ. ພາຍໃຕ້ດຳລັດ 92 ແລະ 315, ເກືອບທຸກດ້ານຂອງການເຄື່ອນໄຫວສາສະໜາເຊັ່ນ: ການເຕົ້າໂຮມຊຸມນຸມ , ການເຮັດພິທີກຳທາງສາສະໜາ, ການປຸກສ້າງບ່ອນສັກກະລະບ ຊາ, ການດັດແປງໂຄງສ້າງສາສະນະສະ ຖານທີ່ມີຢູ່ ແລະ ການສ້າງບ່ອນເຕົ້າໂຮມຊຸມນຸມທາງສາສະໜາແຫ່ງໃໝ່ຢູ່ຕາມບ້ານ ທີ່ຍັງບໍ່ທັນມີບ່ອນເຕົ້າ ໂຮມຊຸມນຸມ ແມ່ນຕ້ອງໄດ້ຂໍອະນຸຍາດຈາກຫ້ອງການພາຍໃນທ້ອງຖິ່ນ ໂດຍບໍ່ກ່ຽວວ່າ: ສາສະໜາດັ່ງກ່າວ ຖືກຮັບຮູ້ຢ່າງເປັນທາງການ ຫຼື ໄດ້ຮັບການຈົດທະບຽນຢູ່ສູນກາງແລ້ວ ຫຼື ບໍ່. ບາງກໍລະນີແມ່ນຕ້ອງຜ່ານການ ຮັບຮອງຈາກ MOHA ຢູ່ຂັ້ນສູນກາງ. ພາຍໃຕ້ດຳລັດສະບັບໃໝ່, ສາສະໜາພຸດ ກໍ່ຄືສາສະໜາອື່ນໆ ທີ່ໄດ້ຈົດທະບຽນແລ້ວ ຈະຕ້ອງເຄື່ອນໄຫວພາຍໃຕ້ລະບຽບການອັນດຽວກັນ ເຊິ່ງໃນເມື່ອກ່ອນ ຫ າຍໆເງື່ອນໄຂເຫຼົ່ານີ້ແມ່ນບໍ່ໄດ້ນຳໃຊ້ກັບເຂົາເຈົ້າ. ດຳລັດ 92 ອະນຸຍາດໃຫ້ພົນລະເມືອງເຜີຍແຜ່, ຈັດພິມ ແລະ ນຳເຂົ້າບັນດາສື່ຄຳສອນສາສະໜາ, ມີສິດເປັນ ເຈົ້າຂອງ ແລະ ສ້າງບ່ອນສັກກະລະບ ຊາ, ແລະ ຕິດຕໍ່ພົວພັນກັບກຸ່ມສາສະໜາຢູ່ຕ່າງປະເທດ. ສິດເຫຼົ່ານີ້ ແມ່ນ ມີສະໜອງໃຫ້ເມື່ອໄດ້ຮັບອະນຸຍາດຈາກຂະບວນການຮັບຮອງທີ່ມີ. LAOS ບົດລາຍງານວ່າດ້ວຍເສລີພາບໃນການເຊື່ອຖືສາສະໜາສາກົນ, ສະບັບປີ 2016 ກະຊວງການຕ່າງປະເທດສະຫະລັດອາເມລິກາ.ສຳນັກງານປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ 5 ຈຸດປະສົງທີ່ກ່າວໄວ້ໃນດຳລັດ 315 ແມ່ນເພື່ອກຳນົດຫຼັກການ, ລະບຽບການ, ແລະ ກົດໝາຍກ່ຽວກັບການ ຄຸ້ມຄອງ ແລະ ປົກປ້ອງບັນດາກິດຈະກຳທາງສາສະໜາສຳລັບນັກບວດ, ນັກສອນສາສະໜາ, ສາສະນິກະຊົນ ຂອງສາສະໜາຕ່າງໆ, ແລະ ກຸ່ມສາສະໜາຕ່າງໆ ເພື່ອປົກປັກຮັກສາ ແລະ ເສີມຂະຫຍາຍ ຮີດຄອງປະເພນີອັນດີງາມຂອງຊາດ, ເພີ່ມທະວີຄວາມສາມະຄີກົມກຽວລະຫວ່າງສາສະນິກະຊົນຂອງກຸ່ມ ສາສະໜາຕ່າງໆ, ແລະ "ເພື່ອປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ." ດຳລັດ 315 ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ເຊິ່ງບໍ່ທັນຮູ້ເທື່ອວ່າ: ອຳນາດການປົກຄອງ ຈະຕີຄວາມ ໝາຍຂອງດຳລັດດັ່ງກ່າວໃນລັກສະນະຄືແນວໃດແດ່. ດຳລັດດັ່ງກ່າວ

ເພີ່ມບົດບາດໃຫ້ MOHA ໃນການຢຸດຕິທຸກກິດຈະກຳທາງສາສະໜາ ຫຼື ຄວາມເຊື່ອ ທີ່ບໍ່ສອດຄ່ອງກັບນະໂຍບາຍ, ຮີດຄອງປະເພນີ, ກົດໝາຍ ຫຼື ລະບຽບການຕ່າງໆພາຍໃນລາວ. ອີງຕາມດຳລັດດັ່ງກ່າວ, MOHA ອາດຈະຢຸດຕິທຸກກິດຈະກຳທາງສະໜາ ທີ່ເປັນໄພຂົ່ມຂູ່ຄຸກຄາມຕໍ່ຄວາມໝັ້ນຄົງແຫ່ງຊາດ, ສັນຕິພາບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ສ້າງຄວາມເສຍຫາຍຮ້າຍແຮງຕໍ່ສິ່ງແວດລ້ອມ, ຫຼືກະທົບຕໍ່ຄວາມສາມະຄີ ຊາດ ຫຼື ຄວາມເປັນເອກະພາບ ລະຫວ່າງປະຊາຊົນບັນດາເຜົ່າ ແລະ ສາສະໜາຕ່າງໆ. ດຳລັດດັ່ງກ່າວ ຮຽກຮ້ອງໃຫ້ MOHA ຕ້ອງເກັບກຳຂໍ້ມູນ ຂ່າວສານ ແລະ ສະຖິຕິກ່ຽວກັບການເຄື່ອນໄຫວສາສະໜາ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບກິດຈະກຳທາງສາສະໜາ ແລະ ລາຍງານ ລັດຖະບານກ່ຽວກັບກິດຈະກຳທາງສາສະໜາຕ່າງໆ. ດຳລັດສະບັບໃໝ່ ເກືອດຫ້າມສ່ວນບຸກຄົນ, ອົງການຈັດຕັ້ງທີ່ມີສະຖານະເປັນນິຕິບຸກຄົນ ແລະ ການຈັດຕັ້ງທາງສັງຄົມຕ່າງໆ ບໍ່ໃຫ້ສ້າງຄວາມແບ່ງແຍກລະຫວ່າງ ປະຊາຊົນ ແລະ ສາສະໜາຕ່າງໆ. ດຳລັດສະບັບໃໝ່ ຍັງກຳນົດວ່າ: ບຸກຄະລາກອນທີ່ຈະຖືກຄັດເລືອກ ຫຼື ແຕ່ງຕັ້ງເຂົ້າໃນຄະນະຮັບຜິດຊອບ ການຈັດຕັ້ງສາສະໜາ ຕ້ອງສະເໜີຕໍ່ຂະແໜງພາຍໃນຢູ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ເພື່ອຄົ້ນຄ້ວາ, ພິຈາລະນາ ແລະ ຮັບຮອງ. ນອກຈາກນັ້ນ, MOHA ແລະ ຫ້ອງການພາຍໃນທ້ອງຖິ່ນ ຍັງມີສິດອຳນາດໃນ ການອອກໃບຢັ້ງຢືນໃຫ້ບັນດາການຈັດຕັ້ງສາສະໜາຕ່າງໆ. ພາຍໃຕ້ດຳລັດສະບັບໃໝ່, ສາສະໜາທີ່ເຄື່ອນໄຫວຢູ່ຫຼາຍແຂວງ ແມ່ນຕ້ອງຂໍອະນຸຍາດຈາກ MOHA ຢູ່ຂັ້ນສູນກາງ; ສາສະໜາທີ່ເຄື່ອນໄຫວຢູ່ຫຼາຍເມືອງ ແມ່ນຕ້ອງຂໍອະນຸຍາດຈາກພະແນກພາຍໃນແຂວງ; ແລະ ສາສະໜາທີ່ເຄື່ອນໄຫວຢູ່ຫຼາຍບ້ານ ແມ່ນຕ້ອງຂໍອະນຸຍາດຈາກຫ້ອງການພາຍໃນເມືອງ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2016).

**2.2 ສາສະໜາພາມ** (30 ນາທີ)

<u>ກິດຈະກຳ 2:</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ:
- ສາສະໜາພາມແມ່ນສາສະໜາແນວໃດແດ່?
- ເນື້ອໃນຂອງສາສະໜາພາມມີແນວໃດແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູນັກສຶກສາສະຫຼຸບຮ່ວມກັນ: (20 ນາທີ)

**ສາສະໜາພາມ** (ອັງກິດ: Hinduism, ຝຣັ່ງ: Hindouisme) ແມ່ນສາສະໜາແບບພະຫຸເທວະນິຍົມ (ເຊື່ອເທບຫຼາຍອົງ). ບໍ່ປາກົດແນ່ຄັກວ່າແມ່ນໃຜເປັນສາສະດາ. ມີຄຳພີສາສະໜາເອີ້ນວ່າພະເວດ ມີສາສະນິກະຊົນຫຼາຍເປັນອັນດັບທີ 4 ຂອງໂລກ ມີຈຳນວນປະມານ 900 ລ້ານຄົນ (History Editors, 2017)

ສາສະໜາພາມໄດ້ກຳເນີດຂຶ້ນໃນເວລາສັງຄົມມະນຸດແບ່ງເປັນຊົນຊັ້ນ, ມີເທິງ, ມີລຸ່ມ, ມີຕໍ່າ, ມີສູງ. ສາສະໜາພາມແມ່ນສາສະໜາປະເພດໜຶ່ງຂອງຊົນຊັ້ນສັກດີນາ. ເອົາປັດໄຈໄສຍະສາດຈິດຕະນິຍົມເປັນຕົ້ນຕໍ. ສາສະໜາພາມໄດ້ກຳເນີດກ່ອນສາສະໜາພຸດ, ສາສະໜາພາມແມ່ນສະສະໜາທີ່ງົມງາຍເຂົາສ້າງລະບົບເຊື່ອຖືແບບຈິດຕະນິຍົມຢ່າງກວ້າງຂວາງ. ເຂົາຈຶ່ງແບ່ງມະນຸດທີ່ດຳລົງຊີວິດໃນສັງຄົມອອກເປັນ 5 ຊົນຊັ້ນຄື:

- ພາມ
- ກະສັດ (ພວກເຊື້ອເຈົ້າ)

- ແພດ (ພວກຄ້າຂາຍ)
- ສູດ (ປະຊາຊົນສາມັນ)
- ຈັນດານ (ພວກເປັນບ້າເປັນຈິດ)

ສາສະໜາພາມຍັງໄດ້ແບ່ງໂລກແຫ່ງທຳມະຊາດອອກເປັນຫຼາຍຊັ້ນແຕກຕ່າງກັນເຊັ່ນ: 16 ຊັ້ນຟ້າ 15 ຊັ້ນດິນ, ຊັ້ນສູງສຸດຂອງຊັ້ນຟ້າແມ່ນພະຍາອິນເປັນຜູ້ສະຖິດຢູ່, ຊັ້ນຕ່ຳສຸດຂອງຊັ້ນຟ້າແມ່ນເທວະດາເປັນຜູ້ສະຖິດຢູ່, ຊັ້ນສູງສຸດຂອງຊັ້ນດິນແມ່ນນາງທໍລະນີສະຖິດຢູ່, ຊັ້ນຕ່ຳສຸດຂອງຊັ້ນດິນແມ່ນ ຈ່າຍົມພິບານເປັນຜູ້ສະຖິດຢູ່. ຈາກນັ້ນ, ຢູ່ຕາມພູຜາປ່າດົງ, ຫ້ວຍນ້ຳລຳເຊ, ດິນຟ້າອາກາດ, ຕົ້ນໄມ້ໃບຫຍ້າກໍມີເທວະບຸດເທວະດາເບິ່ງແຍງ ແລະ ປົກຄອງ. ຈຳພວກນີ້ແມ່ນຈຳພວກທີ່ມີຮູບຮ່າງອະທິທຳ ໝາຍຄວາມວ່າ: ແມ່ນຈຳພວກບໍ່ອາດເຫັນຮູບຮ່າງຂອງພວກເຂົາ. ເທວະບຸດເທວະດາເປັນຜູ້ປັ້ນແຕ່ງມະນຸດ ແລະ ສັດສາວາສິ່ງ (ຕາມທິດສະດີຂອງສາສະໜາພາມ) ເຂົາບໍ່ອີງໃສ່ກົດເກນການຂະຫຍາຍ ຕົວທາງດ້ານຊີວະວິທະຍາ, ຜິດຕໍ່ຫຼັກວິທະຍາສາດ ແລະ ປັດຊະຍາສັດຈະວິພາກອີກດ້ວຍ. ນີ້ກໍພາໃຫ້ມະນຸດເຮົາເຊື່ອຖືງົມງວາຍຕໍ່ຫຼັກການຂະຫຍາຍຕົວຂອງທຳມະຊາດ ແລະ ສັງຄົມ. (ຄຳຜຸນ ພິລາວົງ,1975).

ບັນຫາໜຶ່ງອີກ, ຢູ່ໃນໂລກສິງສານເຮົານີ້ຍັງມີພະລືສີເຊິ່ງເປັນນັກບວດຂອງສາສະໜາພາມ, ພະລືສີເປັນຜູ້ທີ່ມີຄວາມເກັ່ງກ້າສາມາດຮູ້ໄດ້ທຸກບັນຫາຂອງຄົນເຮົາໃນປັດຈຸບັນກໍຄືອະນາຄົດ, ພະລືສີກຳແໜ້ນສະຕາຂອງຄົນເຮົາ, ຄົນທີ່ຕາຍແລ້ວກໍສາມາດກັບຄືນເກີດຂຶ້ນມາໄດ້, ຄົນທີ່ມີຮູບຮ່າງຂີ້ຮ້າຍກໍກາຍເປັນງາມໄດ້ຕາມໃຈມັກຂອງຕົນ, ນັ້ນພະລືສີຈຶ່ງກາຍເປັນຈອມພະຄຸນຂອງທ້າວ ແລະນາງ, ເຂົາເຈົ້າສ້າງລະບົບຄວາມເຊື່ອຖືແບບຈິດຕະນິຍົມຢ່າງກວ້າງຂວາງ. ສາສະໜາພາມໄດ້ແບ່ງໂລກອອກເປັນຫຼາພາກສ່ວນ, ແບ່ງຊັ້ນອາວາກາດ (ຊັ້ນຟ້າ) ອອກເປັນ 16 ຊັ້ນ ແລະແບ່ງຊັ້ນດິນອອກເປັນ 15 ຊັ້ນແຕ່ລະຊັ້ນມີເຈົ້າປົກຄອງ, ຈຳພວກນີ້ແມ່ນຮູບຮ່າງອະພິທຳ ຄົນ ແລະ ສັດລ້ວນແລ້ວແຕ່ມີຜູ້ປັ້ນແຕ່ງຂຶ້ນນີ້ກໍເປັນກໍລະນີຜິດພາດຕາມກົດເກນຂະຫຍາຍຕົວດ້ານຊີວະວິທະຍາ, ດ້ານປັດຊະຍາສັດຈະວິພາກ ພາໃຫ້ເຮົາເຊື່ອຖືແບບງົມງວາຍຕໍ່ສະພາບຂອງການຂະຫຍາຍຕົວຂອງສັງຄົມມະນຸດ ແລະ ການຂະຫຍາຍຕົວຂອງໂລກທຳມະຊາດທີ່ຢູ່ອ້ອມຂ້າງ.

ອີກບັນຫາໜຶ່ງ, ຢູ່ໃນໂລກສິງສານພະລືສີເປັນຜູ້ເກັ່ງກ້າສາມາດຮັບຮູ້ໄດ້ໃນທຸກບັນຫາສະຕາຊີວິດຂອງມະນຸດ ນັບທັງການມີຊີວິດ ຫຼື ຕາຍຂອງມະນຸດ, ພະລືສີກຳນົດສະຕາກຳຂອງຄົນເຮົາສາມາດເອົາຄົນທີ່ຕາຍແລ້ວກັບຄືນມາມີຊີວິດອີກ. ຊ່ວຍຄົນທີ່ມີຮູບໂສມເຫີຮ້າຍໃຫ້ກາຍມາເປັນຄົນງາມໄດ້, ແຕ່ໃນຄວາມເປັນຈິງແລ້ວ ການດຳລົງຊີວິດຂອງຄົນເຮົາບໍ່ອາດຈະພົບພໍ້ຈັກເທື່ອ ນີ້ກໍພຽງແຕ່ໄຝ່ຝັນເທົ່ານັ້ນ. ສາສະໜາພາມແມ່ນສາສະໜາໜຶ່ງທີ່ມີການເຊື່ອຖືແບບງົມງວາຍຈິດຕະນິຍົມ. ບັນດາສາສະໜາທີ່ເຊື່ອຖືແບບງົມງວາຍລ້ວນແລ້ວແຕ່ແມ່ນສິ່ງເບື່ອເມົາຄົນເຮົາໄປຕາມເສັ້ນທາງຜິດຕໍ່ວິທະຍາສາດ ແລະ ດ້ານວິທະຍາສາດທັງໝົດ.

ສາສະໜາພາມເປັນສາສະໜາຈິດຕະນິຍົມ ແລະ ຖືກຊົນຊັ້ນສັກດິນາໝູນໃຊ້ເຂົ້າໃນການປົກຄອງນັບແຕ່ມື້ກຳເນີດເປັນຕົ້ນມາ. ດັ່ງນັ້ນ, ສາສະໜາພາມຈຶ່ງກາຍເປັນພາກສ່ວນໜຶ່ງຂອງລະບົບແນວຄິດຂອງຊົນຊັ້ນສັກດິນາ, ສາສະໜາພາມຍັງມີຜົນສະທ້ອນຕໍ່ສາສະໜາພຸດ ເຊິ່ງເປັນສາສະໜາປະຈຳຊາດຂອງລາວເຮົາໃນໄລຍະຕໍ່ມາອີກດ້ວຍ. (ສົມທະເພີຍ ສີວົງສັກ ແລະອາໄພ ສອນທະລາ: 2019).

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

- **ຂັ້ນສະຫຼຸບ**
- ຄູເນັ້ນຈຸດສຳຄັນຂອງບົດຮຽນ
- ການເຊື່ອຖືໄສຍະສາດ
- ການເຊື່ອຖືຜີ
- ການເຊື່ອຖືສາສະໜາພາມ

**IV. ວັດ ແລະປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ?
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ຄຳພຸນ ພິລາວົງ. (1975). ພະເຈົ້າສິບຊາດຢ່າງຫຍໍ້, ພິມຄັ້ງທີ 2, ວຽງຈັນ.

ຄຳຮຸ່ງ ແສງມະນີ. (2004). ຄະຕິຊົນພື້ນເມືອງລາວ. ພາກວິຊາພາສາລາວ-ວັນນະຄະດີ ຄະນະອັກສອນສາດ ມະຫາວິທະ ຍາໄລແຫ່ງຊາດ.

ສົມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ພາກວິຊາຄູພາສາລາວ-ວັນນະຄະດີ. (2006). ແບບຮຽນວັນນະຄະດີອິນເດຍ. ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ກະຊວງການຕ່າງປະເທດສະຫະລັດອາເມລິກາ (2016). ບົດລາຍງານວ່າດ້ວຍເສລີພາບໃນການເຊື່ອຖືສາສະໜາສາກົນ, ສະບັບປີ 2016. ສຳນັກງານປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ. ແຫຼ່ງຂໍ້ມູນມາຈາກ https://la.usembassy.gov/wp-content/uploads/sites/85/2016-IRFR-Laos-FINAL-From-State-Public-Page_translated_Lao_final.pdf

History Editors (2017). Hinduism. ແຫຼ່ງຂໍ້ມູນມາຈາກ https://www.history.com/topics/religion/hinduism

ຄູສອນປະຈຳວິຊາ



ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ປທ. ສົມທະເພີຍ ສີວົງສັກ